# ເງື່ອນໄຂຮັບເອົາ Waiver

ຜູ້ຮັບການຊ່ວຍເຫລືອຕ້ອງໄດ້ສອດຄ່ອງນຳກົດເກນທຸກໆຢ່າງ:

- ເປັນລູກຄ້າຜູ້ທີ່ມີເງື່ອນໄຂໄດ້ຮັບຂອງຜະແນກ DDA ໂດຍອີງຕາມ RCW 71A.10.020(5).
- ມີຄວາມເສັຽອົງຄະໂດຍອີງຕາມກົດເກນທີ່ຖືກກໍ່ຕັ້ງໄວ້ແລ້ວຢູ່ໃນກົດຫມາຍ Social Security Act.
- ຮ້ອງຂໍເອົາການບໍຣິການປິ່ນປົວຣະຍະຍາ Medicaid ແລະ ມີຣາຍໄດ້ທີ່ພິສູດໄດ້ຊຶ່ງບໍ່ກາຍເກີນ 300% ຂອງມາດຕະຖານການ ຊ່ວຍເຫລືອເງິນ SSI ຂອງຣັດຖະບານກາງ.
  - ຖ້າຫາກວ່າເປັນເດັກນ້ອຍ, ຣາຍໄດ້ ແລະ ຊັບສິນຂອງພໍ່ແມ່ຈະບໍ່ຖືກພິຈາຣະນາຄິດໄລ່ໃສ່
  - ຖ້າຫາກວ່າເປັນຜູ້ໃຫຍ່ອາສັຍຢູ່ນຳຄູ່ຜົວເມັຽ, ຣາຍໄດ້ ແລະ ຊັບສິນຂອງ ຄູ່ຜົວເມັຽຈະບໍ່ຖືກ ພິຈາຣະນາຄິດໄລ່ໃສ່.
- ມີຊັບສິນຕ່ຳກວ່າ $2,000 ຫລື ຢູ່ໃນໂຄງການ Apple Health for Workers with Disabilities (HWD).
- ສອດຄ່ອງນຳຣະດັບຂອງການປິ່ນປົວທີ່ຖືກເອົາໃຫ້ຢູ່ໃນສະຖາບັນການ ປິ່ນປົວປານກາງສຳລັບບຸກຄົນທີ່ມີຄວາມເສັຽອົງຄະດ້ານປັນຍາແນວຄິດ (ICF/IID) ຕາມທີ່ຖືກຖືກພິຈາຣະນາເຫັນໂດຍການປະເມີນຜົນຂອງຜະແນກ DDA.
- ແຜນການບໍຣິການລວມສູນໃສ່ບຸກຄົນ (PCSP) ສະແດງໃຫ້ເຫັນວ່າ ຄວາມຕ້ອງທາງດ້ານອະນາມັຍ, ຄວາມປອດພັຍ, ແລະ ການຝຶກຝົນໃຫ້ ດີຄືນສາມາດຖືກຕອບສະນອງໄດ້ແນວໃດຢູ່ຕາມຊຸມນຸມຊົນທີ່ມີການ ບໍຣິການສະລະສິດ ແລະ/ຫລື ການຄວບຄຸມເບິ່ງນຳປະຈຳເດືອນ.
- ຕົກລົງເຫັນພ້ອມທີ່ຈະຮັບເອົາການບໍຣິການອີງໃສ່ເຮືອນ ແລະ ຊຸມນຸມຊົນແທນທີ່ວ່າຈະແມ່ນ ICF/IID.



# ການເຂົ້າເຖິງ Waiver

ຄຳຮ້ອງຂໍເອົາການຈົດຊື່ເຂົ້ານຳ, ຫລື ເພື່ອຈະປ່ຽນໄປເປັນການສະລະ ສິດຢ່າງອື່ນສາມາດຖືກເຮັດໄດ້ໃນທຸກໆເວລາ.ສອບຖາມນຳຜູ້ຈັດການຊ່ວຍເຫລືອກໍຣະນີ (CRM). ຖ້າຫາກວ່າ ່າໄ ບໍ່ມີເວລາວ່າງ, ໃຫ້ສົ່ງ ຄວາມໄວ້ນຳສາຍໂທຣະສັບບໍ່ຈ່າຍເງິນທ້ອງຖິ່ນທີ່ຖືກກ່າວຢູ່ພາຍໄຕ້ຫ້ອງການທ້ອງຖິ່ນ ຫລື ຍື່ນຄຳຮ້ອງຂໍທາງອອນລາຍນ໌ໄດ້ທີ່ **www.dshs.wa.gov/dda/service-and-information-request.** ການສອດຄ່ອງນຳກົດເກນການບໍຣິ ການສຳລັບການສະລະສິດບໍ່ໄດ້ຮັບປະກັນການເຂົ້າເຖິງການບໍຣິການ.ການສະລະສິດແຕ່ລະຢ່າງມີຂອບເຂດໃນຈຳນວນຂອງຄົນຜູ້ທີ່ສາມາດຖືກຮັບໃຊ້. DDA ມີສິດອຳນາດທີ່ຈະຕັ້ງຂອບເຂດການຈົດຊື່ເຂົ້າໃສ່ອີງຕາມການມີໄວ້ໃຫ້ໃຊ້ໃນເງິນທຶນສຳລັບຜູ້ເຂົ້າຮ່ວມນຳການສະລະສິດຄົນໃຫມ່.

# ສິດທິການຟັງເຣື່ອງຈາກອຳນາດການປົກຄອງ

ທຸກໆຄົນມີສິດໃນການຟັງເຣື່ອງຈາກອຳນາດການປົກຄອງນຳການຕັດສິນຕໍ່ລົງໄປນີ້ແນວໃດແນວນຶ່ງໂດຍບໍ່ກ່ຽວນຳໂຄງການ ຫລື ການບໍຣິການ:

- ເງື່ອນໄຂຮັບເອົາຂອງຜະແນກ DDA ໄດ້ຖືກປະຕິເສດ, ຕັດ ຫລື ຜະແນກ DDA ໄດ້ຖ່ວງດຶງຢ່າງບໍ່ມີເຫດຜົນໃນການປະຕິບັດການໃສ່ຄຳຮ້ອງຂໍ; ຫລື
- ຊະນິດ ຫລື ຈຳນວນຂອງການບໍຣິການທີ່ຖືກອະນຸຍາດໃຫ້ໄດ້ຮັບ; ຫລື
- ການປະຕິເສດ, ການລຸດລົງ, ຫລື ການຕັດການບໍຣິການ; ຫລື
- ການປະຕິເສດການເລືອກເອົາທ່ານຫມໍໃຫ້ການບໍຣິການ; ຫລື
- ຖ້າຫາກວ່າໄດ້ຍ້າຍໄປຢູ່ສະຖານທີ່ອາສັຍຢູ່ບ່ອນອື່ນ, ທີ່ບໍ່ແມ່ນບ່ອນເລືອກເອົາຂອງຄົນໃດຄົນນຶ່ງ; ຫລື
- ການປະຕິເສດຂອງຜະແນກ ້ ່າະ ທີ່ຈະເຮັດຕາມຄຳຮ້ອງຂໍບໍ່ໃຫ້ສົ່ງໃບແຈ້ງການໄປຫາຄົນອື່ນຄົນໃດຄົນນຶ່ງ; ຫລື
- ການເຊົາຈົດຊື່ຈາກໂຄງການສະລະສິດ; ຫລື
- ການປະຕິເສດໃນຄຳຮ້ອງຂໍທີ່ຈະຮັບເອົາການບໍຣິການ ICF/IID ແທນທີ່ວ່າຈະແມ່ນການບໍຣິການສະລະສິດ; ຫລື
- ຜະແນກ DDA ຕັດສິນວ່າການບໍຣິການທີ່ມີໄວ້ໃຫ້ໃນການສະລະສິດປັດຈຸບັນສາມາດຕອບສະນອງຄວາມຕ້ອງການດ້ານສຸຂະພາບ ແລະຄວາມຢູ່ດີມີແຮງ ແລະ ບຸກຄົນບໍ່ເຫັນພ້ອມນຳ; ຫລື
- ຄົນໃດຄົນນຶ່ງໄດ້ຖືກຕີຣາຄາປະເມີນຜົນວ່າບໍ່ຕ້ອງການລະດັບການປິ່ນປົວ ICF/IID.




ແວ່ປັ່ຽມພວກເຮົາທາງອອນລາຍນ໌ໄດ້ທີ່:
*dshs.wa.gov/dda/service-and-information-request*

ຊອກຫາຫ້ອງການໄດ້ທີ່:
*dshs.wa.gov/DDA/dda/ find-an-office*

ໂທຫາພວກເຮົາ:

| ຄາວຕີ | ໂທຣະສັບ ແລະ ອີແມລ໌ |
|---|---|
| Chelan, Douglas, Ferry, Grant, Lincoln, Okanogan, Pend Oreille, Spokane, Stevens | (800) 319-7116<br>R1ServiceRequestA@dshs.wa.gov |
| Adams, Asotin, Benton, Columbia, Franklin, Garfield, Kittitas, Klickitat, Walla Walla, Whitman, Yakima | (866) 715-3646<br>R1ServiceRequestB@dshs.wa.gov |
| Island, San Juan, Skagit, Snohomish, Whatcom | (800) 567-5582<br>R2ServiceRequestA@dshs.wa.gov |
| King | (800) 974-4428<br>R2ServiceRequestB@dshs.wa.gov |
| Kitsap, Pierce | (800) 735-6740<br>R3ServiceRequestA@dshs.wa.gov |
| Clallam, Clark, Cowlitz, Grays Harbor, Jefferson, Lewis, Mason, Pacific, Skamania, Thurston, Wahkiakum | (888) 707-1202<br>R3ServiceRequestB@dshs.wa.gov |

*ບຸກຄົນຜູ້ທີ່ຕ້ອງການການອູ້ມຊູນຳການຟັງສຽງ ຫລື ການຕິດຕໍ່ສື່ສານສາມາດໂທຫາຜະແນກ Washington Telecommunication Relay Service ໂດຍການບີບຫາເລກ 7-1-1 ຫລື 1-800-833-6388 (TTY).*

Washington State
Department of Social & Health Services
*Transforming lives*

DSHS 22-1754 LA (2/18) Laotian

# Basic Plus Waiver

ຈາກຜະແນກ
**Developmental Disabilities Administration**



Washington State
Department of Social & Health Services
*Transforming lives*

# ການບັນຣະຍາຍໂດຍສະລູບກ່ຽວກັບ **Waiver**

ກົມ Department of Social and Health Service's Developmental Disabilities Administration (DDA) ມີໂຄງການ Home and Community-Based Service (HCBS) Medicaid Waiver ຫ້າໂຄງການ. ການສະລະສິດ ແຕ່ລະໂຄງການສະເນີໃຫ້ມີການບໍຣິການອັນເຈາະຈົງເພື່ອຈະຕອບສະນອງຄວາມຕ້ອງການທາງດ້ານອະນາມັຍ ແລະ ຄວາມປອດພັຍຢູ່ໃນຊຸມນຸມຊົນ. ໂຄງການ Basic Plus waiver ສະເນີໃຫ້ມີການບໍຣິການຫລາຍໆຢ່າງຊຶ່ງບໍ່ມີໄວ້ໃຫ້ຜ່ານແຫລ່ງຊ່ວຍເຫລືອອື່ນໆ (ປະກັນພັຍເອກຊົນ, Medicaid, ໂຮງຮຽນ,ອື່ນໆ.)

ໂຄງການ Basic Plus waiver ອູ້ມຊູບຸກຄົນຜູ້ທີ່ຕ້ອງການການບໍຣິການສະລະສິດເພື່ອຈະຕອບສະນອງ ຄວາມຕ້ອງການທາງດ້ານອະນາມັຍ ແລະ ຄວາມປອດພັຍທີ່ຖືກຕີຣາຄາປະເມີນຜົນເບິ່ງແລ້ວຢູ່ໃນຊຸມນຸມຊົນ. ການບໍຣິການຈະຖືກເອົາໃຫ້ຢູ່ໃນເຮືອນຂອງເຂົາເຈົ້າເອງ,ເຮືອນຄອບຄົວ, ຢູ່ໃນເຮືອນຄອບຄົວຜູ້ໃຫຍ່ ຫລື ສູນກາງອາສັຍຢູ່ສຳລັບຜູ້ໃຫຍ່. ໂຄງການ Basic Plus waiver ຮັບໃຊ້ບຸກຄົນທຸກໆອາຍຸ.

ຖ້າຫາກວ່າຄວາມຕ້ອງການສຳລັບການບໍຣິການທີ່ຖືກຕີຣາຄາປະເມີນຜົນເບິ່ງແລ້ວກາຍເກີນຂອບເຂດຂອງການບໍຣິການທີ່ຖືກເອົາໃຫ້ພາຍໃຕ້ໂຄງການ Basic Plus waiver, ພະແນກ DDA ຈະທຳຄວາມພະຍາຍາມຕໍ່ລົງໄປນີ້ອີກເທື່ອນຶ່ງ ຫລື ຫລາຍເທື່ອເພື່ອຈະຕອບສະນອງຄວາມຕ້ອງການທາງດ້ານສຸຂະພາບ ແລະ ຄວາມຢູ່ດີມີແຮງ.

- ຊອກຫາການອູ້ມຊູຕາມທັມມະຊາດທີ່ມີໄວ້ໃຫ້ຕື່ມອີກ;
- ເລີ້ມຕົ້ນເຮັດການຍົກເວັ້ນຕໍ່ກົດຣະບຽບເພື່ອຈະສົ່ງອອກມາເຣື່ອງການເຂົ້າເຖິງການບໍຣິການທີ່ບໍ່ແມ່ນສະລະສິດທີ່ມີຢູ່ບໍ່ໃຫ້ລວມຢູ່ໃນໂຄງການ Basic Plus waiver ນອກຈາກການອູ້ມຊູຕາມທັມມະຊາດ;
- ສະເນີໃຫ້ໂອກາດທີ່ຈະຮ້ອງຂໍເອົາການສະລະສິດທາງອື່ນທີ່ມີການບໍຣິການທີ່ຕ້ອງການ;
- ສະເນີໃຫ້ມີການຈັດຫາໃຫ້ຢູ່ໃນ ICF/IID .

ຖ້າຫາກວ່າບໍ່ມີທາງເລືອກເອົາຢູ່ຂ້າງເທິງນີ້ຈັກຢ່າງຕອບສະນອງ ຄວາມຕ້ອງການທາງດ້ານສຸຂະພາບ ແລະ ຄວາມຢູ່ດີມີແຮງ, ພະແນກ DDA ຈະຕັດເງື່ອນໄຂໄດ້ຮັບການສະລະສິດ. ຖ້າຫາກວ່າຖືກຕັດຈາກການສະລະສິດແລ້ວ, ຄົນນັ້ນອາດຈະຍັງມີເງື່ອນໄຂໄດ້ຮັບຢູ່ການບໍຣິການບໍ່ສະລະສິດຂອງພະແນກ DDA.

# ການບໍຣິການ **Waiver**

ຈົ່ງໃຊ້ປື້ມຄູ່ມືຫົວນີ້ເພື່ອຈະວາງແຜນສຳລັບການຕີຣາຄາປະເມີນຜົນປະຈຳປີ. Case resource manager (CRM) ຈະອະທິບາຍເຖິງການບໍຣິການ ແລະ ກົດກຳນົດ, ແລະ ບັນທຶກການບໍຣິການທີ່ຖືກເລືອກເອົາຢູ່ໃນແຜນການ Person-centered service plan (PCSP). ການບໍຣິການບາງຢ່າງຕ້ອງມີການກວດເບິ່ງຄືນ ແລະ ການອະນຸມັດກ່ອນທີ່ມັນຈະຖືກເອົາໃຫ້. ສອບຖາມນຳ CRM ກ່ຽວກັບວ່າຣາຍຣະອຽດແນວໃດແດ່ທີ່ຕ້ອງການສຳລັບການອະນຸມັດລ່ວງຫນ້າ. ການບໍຣິການຢູ່ໃນສີ່ຂະແນງທີ່ມີຂອບເຂດອາຍຸລວມເອົາ:

- *ການບໍຣິການຕາມຊຸມນຸມຊົນ* – ສົ່ງເສີມການເຂົ້າຮ່ວມຂອງລູກຄ້າແລະການປັບຕົວເຂົ້ານຳຊຸມນຸມຊົນ
- *ການບໍຣິການຂອງນັກວິຊາການ* – ການບໍຣິການອູ້ມຊູທີ່ຖືກເອົາໃຫ້ໂດຍນັກວິຊາການທີ່ມີສັນຍາ
- *ການບໍຣິການໃຫ້ການເບິ່ງແຍງດູແລ* – ການອູ້ມຊູສຳລັບຜູ້ເຂົ້າຮ່ວມ ແລະ ຜູ້ໃຫ້ການເບິ່ງແຍງດູແລຂອງເຂົາເຈົ້າ
- *ຜະລິດທະພັນ ແລະ ການບໍຣິການ* – ອຸບປະກອນ, ເຄື່ອງໃຊ້ສອຍ ແລະ ການບໍຣິການພິເສດສຳລັບຜູ້ເຂົ້າຮ່ວມນຳ

*ໃຊ້ບອກໝາຍໃສ່ເພື່ອຈະສະແດງໃຫ້ **CRM** ເຫັນວ່າການບໍຣິການແນວໃດແດ່ທີ່ສົນໃຈ:*

## ການບໍຣິການຕາມຊຸມນຸມຊົນ

☐ **ການຊີ້ນຳໃນຊຸມນຸມຊົນ** – ການບໍຣິການຣະຍະສັ້ນຊຶ່ງຖືກອອກແບບມາເພື່ອຈະພັດທະນາແຫລ່ງຊ່ວຍເຫລືອຕາມຊຸມນຸມຊົນທີ່ຄິດສ້າງ, ປັບໄປມາໄດ້ ແລະ ຖືກອູ້ມຊູ.

☐ **ການລວມເຂົ້າຢູ່ໃນຊຸມນຸມຊົນ** – ການບໍຣິການອູ້ມຊູສ່ວນບຸກຄົນທີ່ຕິດແທດບຸກຄົນຢູ່ໃນຊຸມນຸມຊົນທ້ອງຖິ່ນຂອງເຂົາເຈົ້າເພື່ອຈະກໍ່ສ້າງຄວາມສັມພັນ ແລະ ມິດຕະພາບນຳຄົນອື່ນຜູ້ທີ່ມີຄວາມສົນໃຈຄ້າຍຄຽງກັນ.

☐ **ການບໍຣິການກ່ອນຮຽນວິຊາຊີ ບ** – ການພັດທະນາດ້ານການຝຶກຝົນ ແລະ ຄວາມຊຳນານຣະຍະສັ້ນເພື່ອຈະຕຽມພ້ອມສຳລັບວຽກງານ. ບໍ່ຮັບເອົາການຈົດຊື່ໃຫມ່. *21+*

☐ **ວຽກງານທີ່ຖືກອູ້ມຊູ** – ການອູ້ມຊູສ່ວນບຸກຄົນ ແລະ ເປັນກຸ່ມທີ່ເຂັ້ມຂົ້ນ, ດຳເນີນຕໍ່ໄປເພື່ອຈະໄດ້ມາ ແລະ ຮັກສາວຽກງານເອົາໄວ້. *21+*

☐ **ການຂົນສົ່ງໄປມາ** – ການໃຊ້ເງິນຄືນໃຫ້ຜູ້ໃຫ້ການບໍຣິການສຳລັບການຂົນສົ່ງໄປມາທີ່ບໍ່ແມ່ນການພະຍາບານທີ່ຕ້ອງການເພື່ອຈະເຂົ້າຫາການບໍຣິການສະລະສິດທີ່ຖືກກ່າວເຈາະຈົງຢູ່ໃນ PCSP ຂອງຄົນນຶ່ງ.

## ການບໍຣິການຂອງນັກວິຊາການ

☐ **ການບໍຣິການເຮັດໃຫ້ສຸຂະພາບການປະພຶດໃຫ້ຫຸ່ມທ່ຽງ** – ການບໍຣິການເພື່ອຈະຊ່ວຍເຫລືອ ແລະ ອູ້ມຊູໃນຣະຫວ່າງພາວະເດືອດຮ້ອນສຸຂະພາບການປະພຶດ. ການບໍຣິການລວມເອົາການອູ້ມຊູ ແລະ ການປຶກສາການປະພຶດທີ່ດີ, ການປິ່ນປົວໂຣກຈິດພິເສດ ແລະ ການປິ່ນປົວນອນໂຮງຫມໍໃນພາວະເດືອດຮ້ອນ.

☐ **ການບໍຣິການປິ່ນປົວສຸຂະພາບໂຣກຈິດໃຫ້ຫຸ່ມທ່ຽງ – ການປິ່ນປົວນອນໂຮງຫມໍໃນພາວະເດືອດຮ້ອນ** – ການບໍຣິການປິ່ນປົວຢູ່ຕາມເຮືອນ ແລະ ການປະພຶດຊົ່ວຄາວສຳລັບຜູ້ທີ່ຕົກຢູ່ໃນການສ່ຽງອັນຕະຣາຍຮ້າຍແຮງລົງໄປໃນການທຳງານທາງຈິດໃຈ ແລະ ຢູ່ໃນການສ່ຽງອັນຕະຣາຍຂອງການນອນໂຮງຫມໍໂຣກຈິດ.

☐ **ການອູ້ມຊູການປະພຶດໃຫ້ໄປໃນທາງດີ ແລະ ການປຶກສາ** – ການອູ້ມຊູທີ່ຕີຣາຄາປະເມີນຜົນ ແລະ ແກ້ໄຂຄວາມຕ້ອງການທາງສຸຂະພາບການປະພຶດ. ສິ່ງເຫລົ່ານີ້ລວມເອົາການເຂົ້າແຊກແຊງໂດຍກົງເພື່ອຈະສົ່ງເສີມການປະພຶດຊຶ່ງຈະເຮັດໃຫ້ຄຸນນະພາບຂອງຊີວິດໃຫ້ດີຂຶ້ນ ແລະ ການເຂົ້າໃນຊຸມນຸມຊົນ.

☐ **ການປະເມີນຜົນເບິ່ງການສ່ຽງອັນຕະຣາຍ** – ການຕີຣາຄາປະເມີນຜົນເບິ່ງການປະພຶດຣຸນແຮງ, ເຜົາຣົບກວນ, ອາຣົມທາງເພດ, ຫລື ນຳລ່າເພື່ອຈະພິຈາຣະນາເບິ່ງຄວາມຕ້ອງການໃນການບໍຣິການທາງໂຣກຈິດ, ພະຍາບານ ຫລື ການບຳບັດ.

☐ **ການບໍຣິການປິ່ນປົວໂຣກຈິດໂດຍພິເສດສະເພາະ** – ການປິ່ນປົວໂຣກຈິດເຈາະຈົງສະເພາະຕໍ່ຄວາມຕ້ອງການຂອງບຸກຄົນທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ. *21+*

☐ **ການປຶກສາ ແລະ ການຝຶກຝົນສຳລັບພະນັກງານ/ຄອບຄົວ** – ການຝຶກຝົນ ແລະ ການປຶກສາແບບວິຊາການໃຫ້ແກ່ຄອບຄົວ ແລະຊີ້ນຳໃຫ້ຜູ້ໃຫ້ການບໍຣິການໂດຍກົງເພື່ອຈະຕອບສະນອງຄວາມຕ້ອງການໃຫ້ດີຂຶ້ນກວ່າເກົ່າ. ການປຶກສາກໍມີໄວ້ໃຫ້.

☐ **ການບຳບັດ** – ການບໍຣິການດ້ານວິຊາຊີບ, ຮ່າງກາຍ, ການປາກເວົ້າ, ພາສາ ແລະ ການຟັງສຽງນອກເຫນືອກວ່າທີ່ຖືກເອົາໃຫ້ໂດຍ Medicaid (Apple Health). *21+*

## ການບໍຣິການໃຫ້ການເບິ່ງແຍງດູແລ

☐ **ການຢຸດພັກຊົ່ວຄາວ** – ການຜ່ອນຄາຍຣະຍະສັ້ນໃຫ້ແກ່ບຸກຄົນຜູ້ທີ່ອາສັຍຢູ່ນຳ ແລະ ເບິ່ງແຍງດູແລລູກຄ້າ.

☐ **ການເບິ່ງແຍງດູແລຄົນຊຣາ ຫລື ຄົນບໍ່ແຂງແຮງທີ່ມີຄວາມຊຳນານ** – ການເບິ່ງແຍງດູແລຊຳເຮື້ອ, ຣະຍະຍາວເພື່ອຈະແກ້ໄຂຄວາມຕ້ອງການທີ່ບໍ່ຖືກຕອບສະນອງເທື່ອໂດຍຜ່ານ Medicaid (Apple Care). *21+*

## ຜະລິດທະພັນ ແລະ ການບໍຣິການ

☐ **ການຂ້າທຳລາຍມັດແມງໃນຕຽງ** – ການປົວແປງທຳລາຍມັດແມງຢູ່ໃນເຮືອນ.

☐ **ການຊ່ວຍເຫລືອສຸກເສີນ** – ການເພີ້ມຂຶ້ນຊົ່ວຄາວໃນຂອບເຂດຂອງຈຳນວນເງິນປະຈຳປີເມື່ອເວລາການບໍຣິການເພີ້ມເຕີມແມ່ນຕ້ອງມີ.

☐ **ການປັບຕົວໃຫ້ເຂົ້າກັບສະພາບແວດລ້ອມ** – ການດັດແປງທາງຮູບຮ່າງໃສ່ເຮືອນທີ່ຈຳເປັນສຳລັບບຸກຄົນທີ່ຈະດຳເນີນການດຳຣົງຊີວິດຢູ່ໃນຊຸມນຸມຊົນ.

☐ **ອຸບປະກອນພະຍາບານພິເສດ ແລະ ເຄື່ອງໃຊ້ສອຍ** – ອຸບປະກອນ ແລະ ເຄື່ອງໃຊ້ສອຍທີ່ຈຳເປັນທາງດ້ານການພະຍາບານທີ່ບໍ່ມີໄວ້ໃຫ້ພາຍໃຕ້ໂຄງການ Medicaid (Apple Care).

☐ **ການສຶກສາເຣື່ອງຄວາມຢູ່ດີມີແຮງ** – ຫນັງສືສຶກສາທີ່ຖືກພິມອອກມາປະຈຳເດືອນ, ສ່ວນບຸກຄົນຊຶ່ງຖືກອອກແບບມາເພື່ອຈະຊ່ວຍເຫລືອໃນການກຳກັບຄວບຄຸມບັນຫາທີ່ກ່ຽວກັບສຸຂະພາບ ແລະ ບັນລຸເປົ້າຫມາຍຂອງການຢູ່ດີມີແຮງ.